ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫລວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ເລກທີ 9782/ກປ.ນວ.

ວັນທີ 15 AUG 2022

# ແຈ້ງການ

**ເຖິງ:** ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງ ແລະ ຜູ້ປະກອບການດ້ານການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ການຂຶ້ນທະບຽນ ແລະ ອອກໃບຢັ້ງຢືນມາດຕະຖານເຕັກນິກກ່ຽວກັບກິດຈະການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ໃນນະຄອນຫຼວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ08/ ສພຊ ລົງວັນທີ 11 ພະຈິກ 2016.
- ອີງຕາມກົດໝາຍວ່າດ້ວຍການປະມົງ, ສະບັບເລກທີ 03/ສພຊ ລົງວັນທີ 09 ກໍລະກົດ 2009.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນ ສປປ ລາວ, ເລກທີ 0209/ກປ ວັນທີ 06 ກຸມພາ 2013.

ເພື່ອເປັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດ ໃນ ສປປ ລາວ ແລະ ເປັນການຊຸກຍູ້, ສົ່ງເສີມ, ກວດກາ, ຕິດຕາມ ແລະ ຄຸ້ມຄອງການຂຶ້ນທະບຽນ, ການອອກໃບຢັ້ງຢືນມາດຕະຖານເຕັກນິກບັນດາກິດຈະການກ່ຽວກັບການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ໃນນະຄອນຫຼວງວຽງຈັນ ໃຫ້ເຂົ້າສູ່ລະບຽບຫຼັກການ.

**ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ຈຶ່ງອອກແຈ້ງການ:**

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ລົງຊຸກຍູ້, ສົ່ງເສີມ, ຕິດຕາມ, ກວດກາ, ເກັບກຳຂໍ້ມູນ ແລະ ສັງລວມການຂຶ້ນທະບຽນຟາມລ້ຽງສັດ ແລະ ການອອກໃບຢັ້ງຢືນມາດຕະຖານເຕັກນິກສາຍເປັນ, ຮ້ານຈຳໜ່າຍຜະລິດຕະພັນສັດ, ຮ້ານຈຳໜ່າຍຜະລິດຕະພັນປະມົງ, ຮ້ານຈຳໜ່າຍອາຫານສັດ, ຮ້ານຈຳໜ່າຍອຸປະກອນສັດຕະວະແພດ, ຢາສຳລັບສັດ ແລະ ຄຣີນິກປິ່ນປົວສັດຄືນໃໝ່ທັງໝົດໃນແຕ່ລະເມືອງ.

2. ຜູ້ປະກອບການກິດຈະກຳການລ້ຽງສັດ, ກິດຈະກຳການປະມົງ ແລະ ກິດຈະກຳການສັດຕະວະແພດໃນນະຄອນຫຼວງວຽງຈັນ ຕ້ອງໄດ້ແຈ້ງຂຶ້ນທະບຽນຟາມ ແລະ ແຈ້ງອອກໃບຢັ້ງຢືນມາດຕະຖານເຕັກນິກສາງເຢັນ, ຮ້ານຈຳໜ່າຍຜະລິດຕະພັນສັດ, ຮ້ານຈຳໜ່າຍຜະລິດຕະພັນປະມົງ, ຮ້ານຈຳໜ່າຍອາຫານສັດ, ຮ້ານຈຳໜ່າຍອຸປະກອນສັດຕະວະແພດ, ຢາສຳລັບສັດ ແລະ ຄລີນິກປິ່ນປົວສັດ ຈາກຂະແໜງລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ.
3. ຜູ້ປະກອບການ, ເຈົ້າຂອງຟາມ, ບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນກິດຈະການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດບໍ່ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລ້ຽງ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ ໃຫ້ມີມາດຕະການແກ້ໄຂຕາມແຕ່ລະກໍລະນີເຊັ່ນ: ໃຫ້ການແນະນຳ, ສຶກສາ, ອົບຮົມ, ຕັກເຕືອນ, ປັບໃໝ ແລະ ສັ່ງໂຈະກິດຈະການຕາມລຳດັບ.
4. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ນຳເນື້ອໃນຈິດໃຈຂອງແຈ້ງການສະບັບນີ້ລົງໄປເຜີຍແຜ່ໃຫ້ຜູ້ປະກອບການ, ເຈົ້າຂອງຟາມ, ບຸກຄົນ ຫຼື ນິຕິບຸກຄົນທີ່ດຳເນີນກິດຈະການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດມີປະສິດທິຜົນສູງ.
5. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຜູ້ປະກອບການກ່ຽວກັບກິດຈະການລ້ຽງສັດ, ການປະມົງ ແລະ ການສັດຕະວະແພດ ແລະ ໜ່ວຍງານທີ່ກ່ຽວຂ້ອງຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນແລ້ວງານ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຊາບຢ່າງເປັນລາຍລັກອັກສອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ມາຍັງຂະແໜງການ, ພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນຕາມລະດັບຄາດໝາຍທີ່ວາງໄວ້.

ຫົວໜ້າພະແນກ

ແສງອາລຸນ ສຸລິຍະວົງ

ບ່ອນສົ່ງ:

| | | |
|---|---|---|
| 1. | ຄະນະພະແນກທ່ານລະ | 1 ສະບັບ |
| 2. | ຫ້ອງການບໍລິຫານພະແນກ | 1 ສະບັບ |
| 3. | ຫ້ອງການກະສິກຳ-ປ່າໄມ້ເມືອງລະ | 1 ສະບັບ |
| 4. | ຂະແໜງລ້ຽງສັດ-ການປະມົງ | 1 ສະບັບ |
| 5. | ເກັບມ້ຽນ | 1 ສະບັບ |



CamScanner